ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ: 287..... / ຖວທ.
ນະຄອນຫຼວງວຽງຈັນ, ວັນທີ 3/3/2016

# ຂໍ້ຕົກລົງຂອງລັດຖະມົນຕີ
## ວ່າດ້ວຍການອະນຸມັດຮັບຮອງເອົາຄະນະບໍລິຫານງານ
## ສະມາຄົມນັກປະພັນລາວ ສະໄໝທີ V

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 396/ນຍ ລົງວັນທີ 2 ພະຈິກ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ
- ອີງຕາມກົດລະບຽບ, ພາລະບົດບາດ ແລະ ການເຄື່ອນໄຫວຂອງສະມາຄົມນັກປະພັນລາວ
- ອີງຕາມຜົນຂອງການປ່ອນບັດຄັດເລືອກຄະນະບໍລິຫານງານສະມາຄົມນັກປະພັນລາວ ສະໄໝທີ V ແລະ ກອງປະຊຸມຄັ້ງປະຖົມມະເລີກ ຄັ້ງວັນທີ 10 ກຸມພາ 2016.

ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ
ຕົກລົງ :

ມາດຕາ 1: ອະນຸມັດຮັບຮອງເອົາຄະນະບໍລິຫານງານສະມາຄົມນັກປະພັນລາວ ສະໄໝທີ V ຈຳນວນ 13 ທ່ານ ປະກອບດ້ວຍ:

1. **ທ່ານ ທອງໃບ ໂພທິສານ**
   ເປັນປະທານ, ຮັບຜິດຊອບລວມ, ລົງເລິກຊີ້ນຳວຽກງານການເມືອງ-ແນວຄິດ ແລະ ການຈັດຕັ້ງ
2. **ທ່ານ ນ. ພີວລາວັນ ຫຼວງວັນນາ**
   ເປັນຮອງປະທານ, ຮັບຜິດຊອບວຽກງານກວດກາ

3. ທ່ານ ສຸບັນ ຫລວງລາດ

ເປັນຮອງປະທານ ແລະ ເລຂາທິການ ສນປລ, ຊີ້ນຳວຽກງານຄຸ້ມຄອງ-ບໍລິຫານ

4. ທ່ານ ສົມສຸກ ສຸກສະຫວັດ

ເປັນຄະນະ, ຮັບຜິດຊອບວຽກງານສາຂາ ສນປລ

5. ທ່ານ ສຸຊີ ນໍຣະສິລປ໌

ເປັນຄະນະ, ຮັບຜິດຊອບວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ

6. ທ່ານ ທອງເພີ້ນ ຂຸນພິທັກ

ເປັນຄະນະ, ຮັບຜິດຊອບວຽກງານໂຄສະນາ ແລະ ພິມຈຳໜ່າຍ

7. ທ່ານ ເຄນ ລໍມະນີ

ເປັນຄະນະ, ຮັບຜິດຊອບສາຂາ ສນປລ ແຂວງບໍລິຄຳໄຊ

8. ທ່ານ ວົງສັກດາ ພົມມີໄຊ

ເປັນຄະນະ, ຮັບຜິດຊອບວຽກງານສະໂມສອນນັກຂຽນ

9. ທ່ານ ພັທ ສົມໃຈ ຈັນທະວົງ

ເປັນຄະນະ ແລະ ຮອງເລຂາທິການ ສນປລ, ຮັບຜິດຊອບວຽກງານນິຕິກຳ

10. ທ່ານ ນ. ສົມພຽນ ພົງສະຫວັດມີໄຊ

ເປັນຄະນະ ແລະ ຮອງເລຂາທິການ ສນປລ,. ຮັບຜິດຊອບວຽກງານນະໂຍບາຍ

11. ທ່ານ ຮສ. ແສງຟ້າ ໂຫລານຸພາບ

ເປັນຄະນະ, ຮັບຜິດຊອບວຽກງານສົ່ງເສີມວິຊາການ ແລະ ຂົນຂວາຍສະມາຊິກ

12. ທ່ານ ຄຳສິດ ພົມມະຈັນ

ເປັນຄະນະ, ຮັບຜິດຊອບສາຂາ ສນປລ ແຂວງສະຫວັນນະເຂດ

13. ທ່ານ ນ. ສົມພອນ ທຸມມາວົງ

ເປັນຄະນະ, ຮັບຜິດຊອບວຽກງານຫ້ອງການ ສນປລ

ມາດຕາ 2 : ແຕ່ງຕັ້ງຄະນະທີ່ປຶກສາ ຄະນະບໍລິຫານງານສະມາຄົມນັກປະພັນລາວ ຊຶ່ງປະກອບດ້ວຍ:

1. ທ່ານ ຈັນທີ ເດືອນສະຫວັນ - ອະດີດປະທານ ສນປລ, ນັກປະພັນປະຕິວັດອາວຸໂສ
2. ທ່ານ ດຣ. ທອງຄຳ ອ່ອນມະນີສອນ - ອະດີດປະທານ ສນປລ, ນັກກະວີ
3. ທ່ານ ນ. ດາລາ ກັນລະຍາ - ນັກປະພັນ ກະວີ
4. ທ່ານ ວິເສດ ສະແຫວງສຶກສາ - ອະດີດຮອງປະທານ ສນປລ, ນັກປະພັນ ນັກກະວີ
5. ທ່ານ ນ. ຄຳອອນ ເພັດດາວເຮືອງ - ນັກປະພັນ, ນັກກະວີ

ມາດຕາ 3 : ໃຫ້ຫ້ອງການກະຊວງ, ກົມຈັດຕັ້ງ-ພະນັກງານ, ກົມກວດກາ, ກົມແຜນການ-ການເງິນ, ກົມພິ ຈໍາໜ່າຍ, ສະມາຄົມນັກປະພັນລາວ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານ ໄດ້ຮັບການອະນຸມັດຮັບຮອງ ແລະ ແຕ່ງຕັ້ງຂ້າງເທິງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົ ສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 4 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ
ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ

ສຈ. ດຣ ບໍ່ແສງຄໍາ ວົງດາລາ

<u>ບ່ອນນໍາສົ່ງ:</u>

- ຫ້ອງການກະຊວງ 1 ສະບັບ
- ກົມຈັດຕັ້ງ-ພະນັກງານ 1 ສະບັບ
- ກົມກວດກາ 1 ສະບັບ
- ກົມແຜນການ-ການເງິນ 1 ສະບັບ
- ກົມພິມຈໍາໜ່າຍ 1 ສະບັບ
- ສະມາຄົມນັກປະພັນລາວ 1 ສະບັບ
- ຜູ້ກ່ຽວຂ້ອງ ທ່ານລະ 1 ສະບັບ
- ສໍາເນົາ 1 ສະບັບ